ການຂາດສານອາຫານແມ່ນຫຍັງ?

ຈຸດປະສົງ: ເພື່ອແນະນຳຄວາມໝາຍຂອງການຂາດອາຫານ.

ຂັ້ນຕອນ: ນຳໃຊ້ຮູບພາບຕົ້ນໄມ້ຮ່ຽວແຫ້ງ ແລະ ບໍ່ແຂງແຮງຊ່ວຍໃນການສົນທະນາ.

ອຸປະກອນ: ຮູບພາບຕົ້ນໄມ້ຮ່ຽວແຫ້ງ

ຄຳຖາມ:

- ຮູບນີ້ແມ່ນຫຍັງ?
- ຕົ້ນໄມ້ນີ້ເບິ່ງແຂງແຮງ ແລະ ອຸດົມສົມບໍ?
- ແມ່ນຫຍັງທີ່ເຮັດໃຫ້ຕົ້ນໄມ້ບໍ່ແຂງແຮງ ແລະ ຮ່ຽວແຫ້ງ?
- ພວກເຮົາຈະປ້ອງກັນບໍ່ໃຫ້ຕົ້ນໄມ້ຮ່ຽວແຫ້ງຄືດັ່ງຮູບນີ້ໄດ້ແນວໃດ?

ສະຫຼຸບ:

- ເມື່ອຕົ້ນໄມ້ ບໍ່ໄດ້ຮັບນ້ຳ ຫຼື ຝຸ່ນ, ມັນກໍ່ບໍ່ສາມາດເຕີບໂຕໄດ້. ຮ່ຽວແຫ້ງ ແລະ ບໍ່ສາມາດຕ້ານທານກັບພະຍາດໄດ້, ບໍ່ງອກງາມ ແລະ ໃນທີ່ສຸດກໍ່ຕາຍ.
- ຮ່າງກາຍຂອງຄົນເຮົາກໍ່ເຊັ່ນດຽວກັນ ເມື່ອຮ່າງກາຍເຮົາ ຫຼື ລູກຫຼານຂອງພວກເຮົາບໍ່ໄດ້ກິນອາຫານພຽງພໍກັບຄວາມຕ້ອງການຂອງຮ່າງກາຍ, ມັນກໍ່ຈະນຳໄປສູ່ພາວະຂາດສານອາຫານ. ເດັກກໍ່ຈະບໍ່ເຕີບໂຕດີ ແລະ ບໍ່ແຂງແຮງພໍທີ່ຈະຕ້ານທານກັບພະຍາດເຊື້ອໂລກຕ່າງໆໄດ້.

ບົດຕໍ່ໄປແມ່ນ: ພວກເຮົາຈະໄດ້ຮຽນຮູ້ກ່ຽວກັບຮູບແບບຄວາມແຕກຕ່າງຂອງການຂາດສານອາຫານ.